ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1557/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 26/07/2018

**<u>ແຈ້ງການ</u>**

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ການໃຫ້ຄວາມຊ່ວຍເຫລືອຜູ້ທີ່ຖືກຜົນກະທົບຈາກການເກີດອຸປະຕິເຫດໂຄງການກໍ່ສ້າງເຂື່ອນໄຟຟ້າ ເຊປຽນ-ເຊນ້ຳນ້ອຍ.

ອີງຕາມການແຈ້ງການຂອງຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ ສະບັບເລກທີ 1105/ຫສນຍ, ລົງວັນທີ 24 ກໍລະກົດ 2018 ວ່າດ້ວຍ ການຊ່ວຍເຫລືອຜູ້ປະສົບໄພ ທີ່ໄດ້ຮັບຜົນກະທົບຈາກເຫດການອຸປະຕິເຫດໂຄງການກໍ່ສ້າງເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ ຢູ່ແຂວງອັດຕະປື ໃນຄັ້ງວັນທີ 23 ກໍລະກົດ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ພ້ອມດ້ວຍພະນັກງານທຸກລະດັບ ຂໍສະແດງຄວາມເສົ້າສະຫລົດໃຈ ແລະ ເປັນຫວ່ງເປັນໃຍຢ່າງຍິ່ງຕໍ່ປະຊາຊົນ ຄອບຄົວ ແລະ ທຸກພາກສ່ວນທີ່ໄດ້ຮັບຜົນກະທົບຈາກການເກີດອຸປະຕິເຫດໃນຄັ້ງນີ້. ຜ-ຟຟລ ພ້ອມດ້ວຍພະນັກງານທຸກຄົນ ຈຶ່ງຂໍແບ່ງປັນ ແລະບັນເທົາຄວາມທຸກຂອງພີ່ນ້ອງຮ່ວມຊາດດ້ວຍການບໍລິຈາກເບື້ອງຕົ້ນ ເປັນຈຳນວນເງິນທັງໝົດ 100.000.000 ກີບ ໃນວັນທີ 25 ກໍລະກົດ 2018; ແລະຫວັງຢ່າງຍິ່ງວ່າສະພາບການຕ່າງໆຄົງຈະດີຂຶ້ນ ແລະ ສາມາດຄວບຄຸມໄດ້.

ພ້ອມກັນນີ້ ເພື່ອຮັບປະກັນຄວາມປອດໄພຂອງບັນດາເຂື່ອນໄຟຟ້າທີ່ຂຶ້ນກັບການຄຸ້ມຄອງ ຂອງ ຜ-ຟຟລ ລວມທັງເຂື່ອນໄຟຟ້າທີ່ ຜ-ຟຟລ ເຂົ້າໄປຮ່ວມຮຸ້ນ ແລະເພື່ອຮັບປະກັນການບໍລິຫານນ້ຳໃຫ້ເກີດປະສິດທິຜົນສູງ ມີຄວາມປອດໄພ ຜ-ຟຟລ ໄດ້ແຕ່ງຕັ້ງຄະນະກຳມະການສະເພາະກິດຂຶ້ນເພື່ອຮັບຜິດຊອບສະເພາະ.

ນອກຈາກນີ້ ຜ-ຟຟລ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໂຄງການກໍ່ສ້າງເຂື່ອນໄຟຟ້າ ເຊປຽນ-ເຊນ້ຳນ້ອຍ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ບໍ່ໄດ້ລົງທຶນ ແລະ ບໍ່ໄດ້ເຂົ້າຮ່ວມຮຸ້ນຢູ່ໃນໂຄງການດັ່ງກ່າວ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່</u>

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392

ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la